ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 925 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 31.8.2020

ດ່ວນ

# ແຈ້ງການ

**ຮຽນ:** - ບັນດາ ທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າ ທີ່ນັບຖື.

- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງທົ່ວປະເທດ.

**ເລື່ອງ:** ການສືບຕໍ່ປະຕິບັດບັນດາມາດຕະການຜ່ອນຜັນ, ມາດຕະການໃນການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໄລຍະແຕ່ວັນທີ 01-30 ກັນຍາ 2020.

- ອີງຕາມຄຳສັ່ງ ຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020.
- ອີງຕາມການລາຍງານ ການຈັດຕັ້ງປະຕິບັດບັນດາມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໄລຍະຜ່ານມາ.
- ອີງຕາມທິດຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ໃນວັນທີ 28 ສິງຫາ 2020.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງທິດຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ມາຍັງທ່ານ ຊາບດັ່ງນີ້:

**1. ເຫັນດີໃຫ້ສືບຕໍ່ປະຕິບັດບັນດາມາດຕະການຜ່ອນຜັນ, ມາດຕະການໃນການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຄືກັນກັບບັນດາມາດຕະການທີ່ໄດ້ປະຕິບັດ ໃນເດືອນສິງຫາ 2020 ຜ່ານມາ ຕາມທີ່ໄດ້ລະບຸໃນແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 806/ຫສນຍ, ລົງວັນທີ 29 ກໍລະກົດ 2020 ແລະ ສະບັບເລກທີ 838/ຫສນຍ, ລົງວັນທີ 07 ສິງຫາ 2020 ຢ່າງເຂັ້ມງວດ, ໃນນັ້ນ ສະເພາະມາດຕະການທີ່ສືບຕໍ່ໂຈະ ມີດັ່ງນີ້:**

1) ສືບຕໍ່ປິດບັນດາກິດຈະການຮ້ານບັນເທີງ, ຮ້ານຄາລາໂອເກະ ແລະ ຮ້ານເກມ. ສຳລັບບັນດາຮ້ານບັນເທີງ ແລະ ຮ້ານຄາລາໂອເກະ ໃຫ້ພາກສ່ວນກ່ຽວຂ້ອງ ສືບຕໍ່ຕິດຕາມ ແລະ ກວດກາ ຕາມຄຳສັ່ງຂອງລັດຖະບານ ຜ່ານມາ, ຖ້າເຫັນວ່າຍັງມີການລະເມີດ ໃຫ້ມີການກ່າວເຕືອນ, ຖ້າຍັງຝ່າຝືນ ກໍໃຫ້ດຳເນີນການຖອນໃບອະນຸຍາດຊົ່ວຄາວ.

2) ສືບຕໍ່ປິດດ່ານປະເພນີ ແລະ ດ່ານທ້ອງຖິ່ນ ສຳລັບການເຂົ້າ-ອອກ ຂອງບຸກຄົນທົ່ວໄປ ແລະ ການຂົນສົ່ງສິນຄ້າ, ຍົກເວັ້ນບາງດ່ານປະເພນີ ຫຼື ດ່ານທ້ອງຖິ່ນ ທີ່ໄດ້ຮັບອະນຸຍາດຈາກລັດຖະບານ ໃຫ້ລົດຂົນສົ່ງສິນຄ້າ ເຂົ້າ-ອອກ ໄດ້. ສ່ວນດ່ານສາກົນ ສືບຕໍ່ປິດສຳລັບການເຂົ້າ-ອອກ ຂອງບຸກຄົນທົ່ວໄປ, ຍົກເວັ້ນພົນລະເມືອງລາວ ແລະ ຊາວຕ່າງປະເທດ ທີ່ມີຄວາມຈຳເປັນຮີບດ່ວນໃນການເດີນທາງເຂົ້າ-ອອກ ສປປ ລາວ ທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດ. ສຳລັບການຂົນສົ່ງສິນຄ້າ ຜ່ານດ່ານສາກົນ ແມ່ນສາມາດເຂົ້າ-ອອກ ໄດ້ຕາມປົກກະຕິ.

3) ສືບຕໍ່ໂຈະການອອກວີຊາທ່ອງທ່ຽວ ແລະ ຢ້ຽມຢາມ ສຳລັບບຸກຄົນ ທີ່ເດີນທາງມາຈາກ ຫຼື ຜ່ານປະເທດ ທີ່ຍັງມີການລະບາດ ຂອງພະຍາດ **COVID-19**. ສຳລັບ ນັກການທູດ, ພະນັກງານອົງການຈັດ

ຕັ້ງສາກົນ, ຊ່ຽວຊານ, ນັກລົງທຶນ, ນັກທຸລະກິດ, ວິຊາການ ແລະ ແຮງງານຕ່າງປະເທດ ທີ່ມີຄວາມຈຳເປັນ ແລະ ຮີບດ່ວນ ສາມາດເຂົ້າມາປະຕິບັດວຽກງານ ຢູ່ສະຖານທູດ, ບັນດາກິດຈະການ ແລະ ໂຄງການຕ່າງໆ ໄດ້, ແຕ່ຕ້ອງຜ່ານການພິຈາລະນາເຫັນດີຈາກຄະນະສະເພາະກິດ.

4) ໃຫ້ສືບຕໍ່ໂຈະຊົ່ວຄາວສຳລັບຍົນເຊົ່າເໝົາລຳລະຫວ່າງປະເທດກ່ອນ ແລະ ໃຫ້ຄະນະສະເພາະກິດ ສົມທົບກັບກົມການບິນພົນລະເຮືອນ ແລະ ພາກສ່ວນກ່ຽວຂ້ອງ ສືບຕໍ່ອອກມາດຕະການໃໝ່ ໃຫ້ລະອຽດ ແລະ ຮັດກຸມ ສະເໜີມາຍັງລັດຖະບານ ເພື່ອຂໍການອະນຸມັດກ່ອນ ຈຶ່ງດຳເນີນການໄດ້.

2. ເຫັນດີໃຫ້ນຳໃຊ້ເອົາ ເວລາ 23:00 ໂມງ ຕາມດຳລັດ ສະບັບເລກທີ 315/ລບ, ລົງວັນທີ 02 ຕຸລາ 2017 ເປັນເວລາປິດຮ້ານອາຫານ ໂດຍໃຫ້ປະຕິບັດເປັນເອກະພາບໃນຂອບເຂດທົ່ວປະເທດ. ກ່ຽວກັບການປະຕິບັດບັນດາມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນ ສຳລັບຮ້ານອາຫານ ໃນໄລຍະຜ່ານມາ ທີ່ຍັງມີບາງທ້ອງຖິ່ນ ປະຕິບັດບໍ່ເປັນເອກະພາບກັນນັ້ນ, ມອບໃຫ້ຄະນະສະເພາະກິດ ອອກຄຳແນະນຳສະເພາະ ໃຫ້ລະອຽດຕື່ມ.

3. ໃຫ້ກະຊວງປ້ອງກັນຄວາມສະຫງົບ ສົມທົບກັບອົງການປົກຄອງທ້ອງຖິ່ນ ສືບຕໍ່ເອົາໃຈໃສ່ຢ່າງເຂັ້ມງວດ ໃນການຕິດຕາມ, ກວດກາ ແລະ ຄຸ້ມຄອງ ຜູ້ລັກລອບເຂົ້າເມືອງ ທີ່ບໍ່ໄດ້ຜ່ານດ່ານຊາຍແດນ ມາຈຳກັດບໍລິເວນ ແລະ ເກັບຕົວຢ່າງໄປກວດຫາເຊື້ອພະຍາດ.

4. ມອບໃຫ້ຄະນະສະເພາະກິດ ເປັນໃຈກາງໃນການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ສືບຕໍ່ຕິດຕາມ ແລະ ກວດກາ ການປະຕິບັດບັນດາມາດຕະການຜ່ອນຜັນ, ມາດຕະການໃນການປ້ອງກັນ, ຄວບຄຸມ ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຂອງບັນດາຂະແໜງການ ແລະ ທ້ອງຖິ່ນ ຢ່າງໃກ້ຊິດ, ກໍລະນີມີບັນຫາໃດເກີດຂຶ້ນໃໝ່ ກໍໃຫ້ຮີບຮ້ອນແກ້ໄຂ ໃຫ້ທັນການ, ຖ້າຈຳເປັນ ກໍໃຫ້ລາຍງານລັດຖະບານ ເພື່ອມີທິດຊີ້ນຳ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ບ່ອນນຳສົ່ງ:

| | |
|---|---|
| 1. ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| 2. ຫ້ອງວ່າການສູນກາງພັກ | 01 ສະບັບ |
| 3. ບັນດາສະມາຊິກລັດຖະບານ, ທ່ານລະ | 01 ສະບັບ |
| 4. ຄະນະເລຂາທິການສະພາແຫ່ງຊາດ | 01 ສະບັບ |
| 5. ອົງການຈັດຕັ້ງພັກ, ບ່ອນລະ | 01 ສະບັບ |
| 6. ສູນກາງແນວລາວສ້າງຊາດ | 01 ສະບັບ |
| 7. ອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ, ບ່ອນລະ | 01 ສະບັບ |
| 8. ສຳເນົາ | 01 ສະບັບ |

ເພັດ ພົມພິພັກ